## ຂ້ອຍຈະໄປເອົາລາຍລະອຽດເພີ້ມເຕີມຢູ່ໃສ?

ຕິດຕໍ່ຫາຫ້ອງການ **Community Living Connections/Area Agency on Aging** ທ້ອງຖິ່ນຂອງທ່ານ – ທ່ານສາມາດຊອກຫາສະຖານທີ່ ແລະ ເລກໂທຣະສັບທ້ອງຖິ່ນຢູ່ທີ່ **www.waclc.org** ພາຍໃຕ້ພາກສ່ວນ **Connect** ຫລື ໂທຫາເລກໂທຟຣີ **1-855-567-0252.**

ຫລື ແວ່ເຂົ້າຢ້ຽມ **www.dshs.wa.gov/altsa/home-and-communityservices/caregiver-resources** ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບໂຄງການເຫລົ່ານີ້ ແລະ ແຫລ່ງຊ່ວຍເຫລືອສຳລັບຜູ້ເບິ່ງແຍງດູແລ.

*ການບໍລິການ ແລະ ການອູ້ມຊູທັນຕາມເວລາ, ຈຳກັດສຳລັບບຸກຄົນ ຫລື ຜູ້ເບິ່ງແຍງດູແລຂອງເຂົາເຈົ້າ ຊ່ວຍເຫລືອບຸກຄົນໃຫ້ດຳເນີນຕໍ່ໄປທີ່ຈະອາສັຍຢູ່ໂດຍມີຊີວິດທີ່ບໍ່ຂື້ນນຳໃຜ, ແຂງແຮງຢູ່ໃນເຮືອນຂອງເຂົາເຈົ້າ.*

DSHS 22-1739 LA (Rev. 7/18) Laotian

# ການເບິ່ງແຍງດູແລອີກທາງນຶ່ງຂອງ **Medicaid** ແລະ ການອູ້ມຊູທີ່ຖືກເຮັດອອກມາໃຫ້ເຫມາະສົມສຳລັບຜູ້ໃຫຍ່ອາຍຸແກ່ກວ່າ

*ຜູ້ເບິ່ງແຍງດູແລທີ່ບໍ່ຖືກຈ່າຍເງິນໃຫ້ເປັນກະດູກສັນຫລັງຂອງການບໍລິການ ແລະ ການອູ້ມຊູຣະຍະຍາວຂອງພວກເຮົາ. ການບໍລິການເຫລົ່ານີ້ໄດ້ຖືກອອກແບບມາເພື່ອຈະຊ່ວຍເຫລືອ ຜູ້ເບິ່ງແຍງດູແລທີ່ບໍ່ຖືກຈ່າຍເງິນໃຫ້ໃນການໄດ້ຮັບການອູ້ມຊູທີ່ຈຳເປັນເພື່ອຈະດຳເນີນທີ່ຈະເອົາການເບິ່ງແຍງດູແລທີ່ມີຄຸນນະພາບສູງໃຫ້ ແລະ ເພື່ອຈະມຸ່ງຫມາຍໃສ່ສຸຂະພາບ ແລະ ຄວາມຢູ່ດີມີແຮງຂອງເຂົາເຈົ້າເອງ.*



Washington State Department of Social & Health Services

*Transforming lives*

ຮັດວໍຊິງຕັນສະເນີທີນທາງເພີ້ມເຕີມສອງທີນທາງໃຫ້ເພື່ອຈະອູ້ມຊູຜູ້ໃຫຍ່ແກ່ກວ່າຜູ້ທີ່ຕ້ອງການຄວາມຊ່ວຍເຫລືອເພື່ອຈະອາສັຍຢູ່ໃນເຮືອນ. ໂຄງການເຫລົ່ານີ້, ຕາມທີ່ຖືກບັນຣະຍາຍຢູ່ທາງລຸ່ມນີ້, ອູ້ມຊູຜູ້ເບິ່ງແຍງດູແລທີ່ບໍ່ຖືກຈ່າຍເງິນໃຫ້ຂອງເຂົາເຈົ້າ ຫລື ອູ້ມຊູບຸກຄົນຜູ້ທີ່ບໍ່ມີຜູ້ເບິ່ງແຍງດູແລທີ່ບໍ່ຖືກຈ່າຍເງິນໃຫ້ໃນປັດຈຸບັນນີ້. ຫ້ອງການ **Community Living Connections** ຫລື ຫ້ອງການ **Area Agency on Aging** ທ້ອງຖິ່ນຂອງທ່ານສາມາດໃຫ້ຣາຍຣະອຽດເພີ້ມເຕີມ ຫລື ທ່ານສາມາດຊອກຫາຣາຍຣະອຽດທາງອອນລາຍນ໌ໄດ້.

## ໂຄງການເຫລົ່ານີ້ເອົາຫຍັງໃຫ້ແດ່?

ໂຄງການທັງສອງອັນເອົາການບໍຣິການ ແລະ ການອູ້ມຊູມາກມາຍຫລາຍຢ່າງໃຫ້ທີ່ທ່ານອາດຈະມີເງື່ອນໄຂໄດ້ຮັບ, ລວມທັງ:

- ການບ້ານການເຮືອນ ແລະ ວຽກແລ່ນສ່ວນຕົວ
- ກຸ່ມອູ້ມຊູ ແລະ ການປຶກສາ
- ອຸປະກອນ ຫລື ເຄື່ອງໃຊ້ພະຍາບານພິເສດ
- ທາງເລືອກເອົາການເບິ່ງແຍງດູແລຊໍາຊາ
- ໂອກາດໃນການຝຶກອົບຮົມ
- ໂຄງການ **Adult Day Health** ຫລື **Adult Day Care**
- ຣາຍຣະອຽດກ່ຽວກັບການເບິ່ງແຍງດູແລ, ແຫລ່ງຊ່ວຍເຫລືອຢູ່ໃນຊຸມນຸມຊົນຂອງທ່ານ, ການບໍຣິການທີ່ມີໄວ້ໃຫ້ ແລະ ຢ່າງອື່ນໆ.



ພາຍໃຕ້ໂຄງການ **Tailored Supports for Older Adults,** ການບໍຣິການຊ່ວຍເຫລືອສ່ວນຕົວ (ລວມທັງການເບິ່ງແຍງດູແລສ່ວນຕົວແລະ ການແຕ່ງຕັ້ງນາຍພະຍາບານ) ແມ່ນທາງເລືອກເພີ້ມເຕີມ, ແທນທີ່ວ່າຈະເປັນການເບິ່ງແຍງດູແລຊໍາຊາ, ສໍາລັບຜູ້ໃຫຍ່ຜູ້ທີ່ບໍ່ມີຜູ້ເບິ່ງແຍງດູແລ, ມີອາຍຸ 55 ປີ ຫລື ແກ່ກວ່າ, ແລະ ສອດຄ່ອງນໍາກົດກໍານົດຂອງການທໍາງານໄດ້ ແລະ ທາງການເງິນ.

| ແມ່ນໃຜ | ຊື່ຂອງ ໂຄງການ | ກົດກໍານົດ ຂອງອາຍຸ | ກົດກໍານົດຂອງ **Medicaid** | ກົດກໍານົດ ອື່ນໆ | ຣະດັບຂອງການຊ່ວຍເຫລືອ |
|---|---|---|---|---|---|
| **ຜູ້ເບິ່ງແຍງດູແລ** | ໂຄງການ Medicaid Alternative Care (MAC) | ຜູ້ຮັບເອົາການເບິ່ງແຍງດູແລຕ້ອງມີອາຍຸ 55+ ປີຂື້ນໄປ ແລະ ຜູ້ເບິ່ງແຍງດູແລຕ້ອງມີອາຍຸ 18 ປີ. | ຕ້ອງການໃຫ້ຜູ້ຮັບເອົາການເບິ່ງແຍງດູແລຕ້ອງຢູ່ໃນໂຄງການ Apple Health (Medicaid) ໃນປັດຈຸບັນ. | ຜູ້ຮັບເອົາການເບິ່ງແຍງດູແລຕ້ອງມີຄວາມຕ້ອງການນໍາຄວາມຊ່ວຍເຫລືອນໍາກິຈກັມຂອງການດໍາຣົງຊີວິດປະຈໍາວັນບາງຢ່າງ, ເຊັ່ນວ່າການອາບນໍ້າ, ການຍ່າງ, ຢາກິນ, ການຍ້າຍໄປມາ, ອື່ນໆ. | ຂື້ນນໍາສະພາບການຂອງທ່ານ, ທ່ານສາມາດໄດ້ຮັບຣອດນຶ່ງຂອງຣະດັບຂອງການບໍຣິການ ແລະ ການອູ້ມຊູທີ່ແຕກຕ່າງກັນສາມຢ່າງ. |
| **ຜູ້ເບິ່ງແຍງດູແລ ຫລື ຜູ້ໃຫຍ່ແກ່ກວ່າທີ່ບໍ່ມີຜູ້ເບິ່ງແຍງດູແລ** | ການອູ້ມຊູທີ່ຖືກເຮັດອອກມາໃຫ້ເຫມາະສົມສໍາລັບຜູ້ໃຫຍ່ອາຍຸແກ່ກວ່າ (Tailored Supports for Older Adults) (TSOA) | ຜູ້ຮັບເອົາການເບິ່ງແຍງດູແລຕ້ອງມີອາຍຸ 55+ ປີຂື້ນໄປ ແລະ ຜູ້ເບິ່ງແຍງດູແລຕ້ອງມີອາຍຸ 18 ປີ. | ເງື່ອນໄຂຮັບເອົາ **Medicaid** ບໍ່ແມ່ນກົດກໍານົດ. ຣາຍໄດ້ ແລະ ຊັບສິນຂອງທ່ານສາມາດກາຍເກີນຈໍານວນຂອງ **Medicaid.** ພະນັກງານຈະຊ່ວຍເຫລືອທ່ານພິຈາຣະນາເບິ່ງເງື່ອນໄຂຮັບເອົາດ້ານການເງິນຂອງທ່ານ. | ຜູ້ຮັບເອົາການເບິ່ງແຍງດູແລຕ້ອງມີຄວາມຕ້ອງການນໍາຄວາມຊ່ວຍເຫລືອນໍາກິຈກັມຂອງການດໍາຣົງຊີວິດປະຈໍາວັນບາງຢ່າງ, ເຊັ່ນວ່າການອາບນໍ້າ, ການຍ່າງ, ຢາກິນ, ການຍ້າຍໄປມາ, ອື່ນໆ. | ຂື້ນນໍາສະພາບການຂອງທ່ານ, ທ່ານສາມາດໄດ້ຮັບຣອດນຶ່ງຂອງຣະດັບຂອງການບໍຣິການ ແລະ ການອູ້ມຊູທີ່ແຕກຕ່າງກັນສາມຢ່າງ. |